ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະກວດກາສູນກາງພັກ ເຜີຍແຜ່ວຽກງານຕ້ານການຟອກເງິນ






ຄະນະກວດກາສູນກາງພັກ ແລະ ອົງການກວດກາລັດຖະບານ ໄດ້ຈັດຕັ້ງການເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ບັນດານິຕິກຳທີ່ຕິດພັນໃນວັນທີ 29 ຕຸລາ 2020 ທີ່ຫ້ອງປະຊຸມຂອງຄະນະດັ່ງກ່າວ ໂດຍພາຍໃຕ້ການເປັນປະທານຮ່ວມຂອງທ່ານ ສິງເພັດ ບຸນສະຫວັດທິພັນ ຮອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາລັດຖະບານ ແລະ ທ່ານຄຳພັນ ບຸນພາຄົມ ຮອງປະທານສານປະຊາຊົນສູງສຸດ; ພ້ອມນີ້, ກໍ່ມີບັນດາພະນັກງານຂັ້ນນຳ ແລະ ວິຊາການຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາລັດຖະບານພ້ອມດ້ວຍນັກວິທະຍາກອນຈາກສຳນັກງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມ.

ການເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ບັນດານິຕິກຳທີ່ຕິດພັນໃນຄັ້ງນີ້ ໄດ້ນຳສະເໜີພາບລວມ; ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ; ການກະກຽມການປະເມີນຜົນຮອບດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ດຳລັດວ່າດ້ວຍຄວາມຮັບຜິດຊອບ AML/CFT; ຄຳສັ່ງແນະນຳ ວ່າດ້ວຍການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 01/ຄຕຟງ, ລົງວັນທີ 08 ມັງກອນ 2020 ແລະ ແຜນວຽກໃນຕໍ່ໜ້າ. ການເຜີຍແຜ່ໃນເທື່ອນີ້ ມີຄວາມໝາຍຄວາມສຳຄັນຍິ່ງ, ເປັນໂອກາດທີ່ດີ ເພື່ອເພີ່ມຄວາມຮູ້ ແລະ ຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງກໍຄືເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງທີ່ເປັນຜູ້ຮັບຜິດຊອບໃນການສືບສວນ-ສອບສວນ, ເປັນການແລກປ່ຽນຄວາມຮູ້ ແລະ ນຳໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຂອງຕົນຢ່າງມີປະສິດທິຜົນສູງສຸດ ໂດຍສະເພາະການສ້າງຄວາມຮັບຮູ້ຄວາມເຂົ້າໃຈວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງໂດຍສະເພາະຄຳສັ່ງແນະນຳວ່າດ້ວຍການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄດ້ຮັບຮອງໃນຕົ້ນປີນີ້.

ການເຜີຍແຜ່ ຍັງໄດ້ສ່ອງແສງໃຫ້ເຫັນຄວາມຄືບໜ້າການກະກຽມຄວາມພ້ອມວຽກງານການປະເມີນຮອບດ້ານຂອງ ສປປ ລາວ ໃນປີ 2020-2021 ທີ່ມີ 4 ແຜນວຽກບູລິມະສິດຂອງ 4 ພາກສ່ວນ ໃນນີ້ແມ່ນວຽກງານເຜີຍແຜ່ ແລະ ເຊື່ອມຊຶມ; ວຽກງານນິຕິກໍາແລະກົນໄກ; ວຽກງານຄຸ້ມຄອງ ແລະ ວຽກງານການດໍາເນີນຄະດີ ແນໃສ່ເພື່ອຮັບປະກັນການປະເມີນດ້ານນິຕິກໍາ, ກົນໄກ ແລະ ປະສິດທິຜົນ ຊຶ່ງຂະບວນການປະເມີນນອກຈາກດ້ານເອກະສານທີ່ໄດ້ສົ່ງໃຫ້ທີມປະເມີນ ສປປ ລາວ ກ່ຽວກັບດ້ານນິຕິກໍາແຕ່ເດືອນມີນາ 2020 ແລະ ໄດ້ມີການປະເມີນຕົວຈິງຜ່ານທາງວິດີໂອໃນເດືອນສິງຫາ 2020 ເພື່ອຊີ້ແຈງດ້ານນິຕິກໍາ.

ສິ່ງທີ່ກ່າວມາທາງເທິງນີ້, ໄດ້ຊີ້ໃຫ້ເຫັນໝາກຜົນຄວາມຄືບໜ້າທີ່ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມແຜນການທີ່ວາງໄວ້. ທັງນີ້ ກໍ່ເພື່ອເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**